ກຳລັງທັບເສລີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສລີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສລີປະຊາທິປະໄຕລາວ.**

**ເລກທີ ໔໕ກຼ/ປພຖຂ/໐໕໑໓໐໙**

# ບົດຄວາມ

## ກົດໝາຍຕັ້ງ NGO. ໃນລາວ

ກົດໝາຍ ອະນຸຍາດໃຫ້ຕັ້ງ ອົງການທີ່ບໍ່ຂຶ້ນກັບຣັຖບານ (NGO) ທີ່ທ່ານ ບົວສອນ ບຸບຜາວັນ ນາຍົກຣັຖມົນຕຣີ ໄດ້ເຊັນ ເມື່ອວັນທີ່ 29 ເມສາ 2009 ຜ່ານມານີ້,ແມ່ນກົນອຸບາຍຫລອກລວງປະຊາຊົນ, ແມ່ນເຄື່ອງມື ຮັບໃຊ້ໜ້າທີ່ການເມືອງ ໃນລະຍະໃໝ່ ເພື່ອຫລອກລວງ ໃຫ້ຊາວໂລກ ຫລົງເຊື່ອວ່າ "ພັກຣັດ ໄດ້ເຄົາຣົບ ຕໍ່ສິດທິເສຣີພາບ ຂອງປະຊາຊົນ" ໂດຍສະເພາະ ແມ່ນ ເພື່ອເປັນ ການຫລຸດຜ່ອນ ຄວາມກົດດັນຂອງສາກົນ ແລະເພື່ອຫລອກລວງ ໃຫ້ຄົນລາວ ນອກປະເທດເຂົ້າໄປ ລົງທຶນ, ສົ່ງເງິນ ໄປໃຫ້ຍາດພີ່ນ້ອງ, ໄປສ້າງສາຕ່າງໆ...ແລະລ້ຽງປາກລ້ຽງທ້ອງຂອງພວກເຂົາເທົ້ານັ້ນເອງ.

ອົງການ ທີ່ບໍ່ຂຶ້ນກັບຣັຖບານ ຢູ່ໃນລາວ ແມ່ນເຄື່ອງມື ຕົວະຍົວະ ຫລອກລວງ ໃນລະຍະໃໝ່ ທີ່ ຊາວໂລກ ກຳລັງສຸມໃສ່ຢ່າງແຮງ ໃຫ້ພັກຣັດ ຕ້ອງປ່ຽນຣັຖບານໂດຍໄວ. ມັນໄດ້ເປັນເຄື່ອງມືຕໍ່ລອງ ຂໍຄວາມເຫັນໃຈ ຈາກປະຊາຊົນລາວ ໃຫ້ຫັນໜ້າເຂົ້າມາ ນສັບສນູນອຳນາດຜເດັດການ ສືບຕໍ່ໄປ... ໃຫ້ເຂົ້າໄປລົງທຶນ ທຳທຸຣະກິດ. ຖ້າບໍ່ເອົາເລື້ອງ NGO. ອອກມາເປັນສາກບັງໜ້າແລ້ວ ກໍບໍ່ມີອັນໃດ ຈະໄປຕົວະ ໃຫ້ນັກລົງທຶນ ໄດ້ເຂົ້າໄປລົງທຶນອີກ ເພາະ, ນັບແຕ່ພັກຣັດ ໄດ້ປະກາດ ໄຂປະຕູປະເທດ ຕໍ່ໂລກພາຍນອກ, ໄດ້ມີນັກທຸຣະກິດລາວ ຫລາຍຮ້ອຍຄົນ ເຂົ້າໄປທຳທຸຣະກິດ, ນັບຕັ້ງແຕ່ ຕັ້ງຮ້ານ ອາຫານ, ຂາຍຣົຖໃຫຍ່, ຕັ້ງປ້ຳນ້ຳມັນ, ຮ້ານຄ້າ ລວມໄປເຖິງການສ້າງໂຮງແຮມຕ່າງໆເຫລົ່ານີ້ ກໍລ້ວນແລ້ວ ແຕ່ຖືກພັກຣັດ ສໍ້ໂກງ ກັ່ນແກ້ງເອົາໄປ. ບັນດານັກລົງທຶນເຫລົ່ານັ້ນ, ກໍໄດ້ບອກເຖິງ ວິທີການສໍ້ໂກງ ຂອງພັກຣັດ ຕໍ່ໆກັນໄປ.... ເຮັດໃຫ້ນັກລົງທຶນ ບໍ່ກ້າໄປສ່ຽງຕື່ມອີກ. NGO. ໃນລາວ, ແມ່ນເຄື່ອງມືຕົວະຍົວະໃນລະຍະໃໝ່ ທີ່ພັກຣັດ ນຳອອກມາ.ເມື່ອເຫັນວ່າ ແຜນການຕົວະຍົວະ ອັນເກົ່ານັ້ນ ໝົດນ້ຳຢາ... ບໍ່ມີໃຜເຊື່ອອີກແລ້ວ.

ການສໍ້ໂກງນັກທຸຣະກິດ ໃຫ້ໝົດເນື້ອໝົດຕົວ ໃນເບື້ອງຕົ້ນ, ພັກຣັດອ້າງວ່າ ຍ້ອນບໍ່ທັນມີກົດໝາຍການຄ້າ ການລົງທຶນຄັກແນ່ ຈຶ່ງເກີດມີການ ຜິດພາດ. ຕໍ່ມາ, ກໍໃຫ້ເຫດຜົນ ວ່າ ກົດໝາຍຍັງບໍ່ທັນນຳອອກມາປະຕິບັດ ແລະສຸດທ້າຍ, ເມື່ອມີກົດໝາຍອອກມາແລ້ວ, ການສໍ້ໂກງ ກັ່ນເກ້ງນັກລົງທຶນ ກໍຍິ່ງເປີດເປັນ, ປະຕິບັດກັນ ແບບແລກປ່ຽນ " **ມືຂວາ ຍື່ນໂຄງການໃຫ້-ມືຊ້າຍ ຮັບສິນບົນ**" ຊຶ່ງເປັນທີ່ນິຍົມກັນຢູ່ໃນປະຈຸບັນນີ້. ໃນຄວາມເປັນຈິງແລ້ວ, ຈະມີ NGO. ຫລືບໍ່...ກໍບໍ່ມີຫຍັງປ່ຽນແປງ! ຂແນງການໃຫຍ່ໆ ທີ່ເປັນ ພື້ນຖານ ໃນການບໍຣິຫານປະເທດຊາດ ເຊັ່ນ: ການທະຫານ, ການເມືອງ, ເສຖກິດແລະວັທນະທັມ ສັງຄົມ, ສ່ວນຫລັກໆແລ້ວ, ກໍຍັງຄືເກົ່າ! ພັກຣັດຍັງໃຊ້ອຳນາດ ປາຍປືນທາງທະຫານ ເຂັ່ນຂ້າປະຊາຊົນ ໃນຊາດ ຂອງຕົວເອງຕາມເຄີຍ. ດ້ານ ການເມືອງ, ກໍຍັງແມ່ນພັກໂທນ ພັກດຽວຄອງອຳນາດ. ສ່ວນດ້ານເສຖກິດນັ້ນ, ພັກຣັດໃຫ້ມີພາກສ່ວນ ເອກຊົນ ເຂົ້າຮ່ວມ ຊຶ່ງສ່ວນໃຫຍ່ແລ້ວ, ກໍແມ່ນ ລູກຫລານ, ພັກພວກ ເສັ້ນສາຍຂອງພັກຣັດເທົ່ານັ້ນເອງ ເຂົ້າມາຈັດຕັ້ງເປັນບໍຣິສັດຕ່າງໆ ເພື່ອຮອງຮັບ ເອົາການຊ່ວຍເຫລືອ ຈາກຕ່າງປະເທດ ແລະດຶງເອົາ ເງິນງົບປະມານການສ້າງສາ ອອກມາແບ່ງປັນກັນ ເອົາເຂົ້າຖົງຕົນເອງ... ຈົນພາໃຫ້ລ້ຳລວຍ ຮັ່ງມີຂຶ້ນ ຢ່າງມະຫາສານ. ສ່ວນປະຊາຊົນລາວ ແມ່ນໄດ້ຮັບແຕ່ ຄວາມທຸກຍາກ ລຳບາກລົງໄປຊັກໃຊ້! ຍ້ອນພັກລັດ ບໍ່ໄດ້ພັທນາພວກເຂົາ ໃຫ້ພົ້ນຈາກຄວາມ ທຸກຈົນຢ່າງແທ້ຈິງ. ພັກຣັດ ເລັ່ງພັທນາ... ແຕ່ຄນະບໍຣິຫານງານ ສູນກາງພັກ 55 ສະຫາຍ, ຜູ້ແທນ 498 ສະຫາຍແລະສະມາຊິກ ພັກ ທົ່ວປະເທດ 148,590 ສະຫາຍ. ສ່ວນປະຊາຊົນທີ່ບໍ່ເປັນສະມາຊິກ ພັກນັ້ນ, ກໍເປັນພຽງສາກບັງໜ້າ ເພື່ອຂໍການຊ່ວຍເຫລືອຈາກຕ່າງປະເທດ ເອົາມາແບ່ງປັນ ເຂົ້າຖົງສ່ວນຕົວ ຂອງໃຜລາວເທົ່ານັ້ນເອງ.

ພັກຣັດສວຍໃຊ້ອົງການ ທີ່ບໍ່ຂຶ້ນກັບຣັຖບານ NGO. ນີ້, ກໍເປັນພຽງຂໍ້ອ້າງ ທີ່ສາກົນ ກຳລັງ ບີບຣັດໃຫ້ເຄົາຣົບ ຕໍ່ສິດທິເສຣີພາບ ຂອງປະຊາຊົນແລະເປັນການຈອບອອຍ ຄົນລາວນອກປະເທດ ໃຫ້ຫລົງເຊື່ອ ວ່າ "ມີການປ່ຽນແປງ ມາເປັນເສຣີໃນໂຕຂອງມັນແລ້ວ" ແຕ່ມັນກໍເປັນພຽງກົນລວງ ໃຫ້ຜູ້ທີ່ບໍ່ຮູ້ ທາດແທ້ ອຳມະຫິດ ຂອງພັກຣັດນັ້ນ ຫລົງເຊື່ອເທົ່ານັ້ນເອງ. ຕາບໃດ ທີ່ການທະຫານ, ການເມືອງ ຍັງບໍ່ທັງມີ ການປ່ຽນແປງ... ຍັງໃຊ້ທະຫານປາບປາມປະຊາຊົນ, ຍັງເປັນຜເດັດການ ພັກດຽວ ຄອງອຳນາດ...ຕາບນັ້ນ, ທຸກຢ່າງທີ່ພັກຣັດແຕ່ງຕັ້ງຂຶ້ນມາ ແມ່ນກະທັ່ງ ກົດໝາຍຣັຖທັມນູນ, ກົດໝາຍ ປາບປາມ ການຄ້າຢາເສບຕິດ, ປາບປາມ ການຄ້າມະນຸດ, ການສໍ້ຣາດບັງຫລວງ, ການຮັກສາ ສະພາບແວດລ້ອມ ຕ່າງໆເຫລົ່ານີ້, ກໍລ້ວນແລ້ວແຕ ່ແມ່ນເອກສານຕົວະຍົວະຫລອກລວງ, ຈອບຂໍການ ຊ່ວຍເຫລືອ ຈາກໂລກເສຣີເທົ່ານັ້ນເອງ.

ສັ້ນ, ຂໍໃຫ້ອົງການຈັດຕັ້ງສາກົນ ຢ່າໄດ້ຫລົງກົນລວງ ຂອງພັກຣັດວຽງຈັນ ທີ່ເວົ້າແນວນຶ່ງ ແຕ່ຊ້ຳ ພັດເຮັດອີກແນວນຶ່ງ. ຈົ່ງສືບຕໍ່ບີບຣັດ ໃຫ້ພັກຣັດວຽງຈັນ ຕ້ອງປ່ຽນຣັຖບານໂດຍໄວ.

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**

**ກອງວິຈັຍ**

**ວັນທີ ໑໗ ມິຖຸນາ ໒໐໐໗**